ສຳນັກງານໃຫຍ່

ເລກທີ: 033 /ທຄຕລ...ສພທ.......
ນະຄອນຫຼວງວຽງຈັນ, ວັນທີ:..02..ກັນຍາ..2024....

# ມະຕິ
# ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ
# ຄັ້ງທີ 3 ປະຈຳປີ 2024, ວັນທີ 02/09/2024

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນຄັ້ງທີ 3 ປະຈຳປີ 2024 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 13:30-17:20 ໂມງ ວັນທີ 02 ກັນຍາ 2024 ທີ່ສຳນັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ບຸນປອນ ວັນນະຈິດ ປະທານສະພາບໍລິຫານ, ມີສະມາຊິກສະພາບໍລິຫານເຂົ້າຮ່ວມ 06 ທ່ານ (ສະມາຊິກສະພາບໍລິຫານ ທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມມີ: ທ່ານຮອງປະທານສະພາບໍລິຫານ ແລະ ທ່ານຕົວແທນຜູ້ຖືຮຸ້ນຍຸດທະສາດ), ມີຄະນະອຳນວຍການ ແລະ ພະແນກທີ່ກ່ຽວຂ້ອງເຂົ້າຮ່ວມເປັນຜູ້ສັງເກດການ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:**

1. ຮັບຊາບລາຍງານຜົນດຳເນີນທຸລະກິດ (ຕົວເລກຮອດເດືອນ 07/2024);
2. ຮັບຮອງຖານະການເງິນປະຈຳ 6 ເດືອນປີ 2024 ຕາມມາດຕະຖານບັນຊີລາວ ທີ່ຜ່ານການທົບທວນໂດຍຜູ້ກວດສອບອິດສະຫຼະ;
3. ຮັບຊາບລາຍງານ ກ່ຽວກັບ ການລຶບລ້າງໜີ້ສິນຂອງລູກຄ້າບໍລິສັດ 1 ລາຍ;
4. ຮັບຮອງການປ່ອຍກູ້ໃຫ້ລູກຄ້າບໍລິສັດ 2 ລາຍ ທີ່ຂຶ້ນກັບສິດອະນຸມັດຂອງສະພາບໍລິຫານ;
5. ຮັບຮອງດ້ານຫຼັກການ ກ່ຽວກັບ ແຜນການຂາຍທີ່ດິນ 01 ຕອນ ທີ່ເປັນຊັບສິນຂອງ ທຄຕລ;
6. ຮັບຮອງການປັບປຸງນະໂຍບາຍສຳລັບພະນັກງານ ທຄຕລ ນັບແຕ່ເດືອນ 10 ປີ 2024 ເປັນຕົ້ນໄປ;
7. ຮັບຮອງບາງບັນຫາສຳຄັນ ກ່ຽວກັບ ຮອງປະທານສະພາບໍລິຫານ ທຄຕລ;
8. ຮັບຮອງໃນດ້ານຫຼັກການ ກ່ຽວກັບ ການປະຕິບັດທາງດ້ານບັນຊີຂອງໂຄງການກໍ່ສ້າງສູນສຳຮອງຂໍ້ມູນ (Data Center) ຂອງ ທຄຕລ.

**ປະທານສະພາບໍລິຫານ**

**ບຸນປອນ ວັນນະຈິດ**